ສຸວັນນີ ຮັບລາງວັນວິສາຫະກິດດີເດັ່ນ ປະເພດ I ປະຈຳປີ 2022

ນອກຈາກການເອົາໃຈໃສ່ໃນການພັດທະນາສິນຄ້າ ແລະ ບໍລິການແລ້ວ ອີກໜຶ່ງມາດຕະຖານຄຸນນະພາບທີ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຕື່ນຕົວປະຕິບັດ ແລະ ປະກອບສ່ວນໃນພາລະບົດບາດກໍຄື ການ ມອບພັນທະອາກອນເຂົ້າງົບປະມານແຫ່ງລັດ ທີ່ເຮົາໄດ້ມີການແຈ້ງ-ມອບອາກອນປົກກະຕິ ແລະ ມອບຖືກຕ້ອງຄົບ ຖ້ວນຕາມກຳນົດກົດໝາຍ ຈົນເປັນທີ່ຍອມຮັບຢ່າງເປັນທາງການຈາກ ກົມສ່ວຍສາອາກອນ ເຮັດໃຫ້ໄດ້ຮັບລາງວັນ ແລະ ໃບຍ້ອງຍໍ ໃນການເປັນວິສາຫະກິດທີ່ປະຕິບັດມອບພັນທະອາກອນດີເດັ່ນ ປະເພດ I ປະຈຳປີ 2022.

ໃນວັນທີ 21 ກຸມພາ 2024 ທີ່ຜ່ານມາ **ທ່ານ ວັດດານາ ສຸຄະບັນດິດ** ຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເຂົ້າຮ່ວມພິທີ **"ມອບໃບຍ້ອງຍໍລັດວິສາຫະກິດທີ່ປະຕິບັດພັນທະສ່ວຍສາອາກອນດີເດັ່ນ ປະຈຳປີ 2022"** ພ້ອມທັງຂຶ້ນຮັບລາງວັນ ແລະ ໃບຍ້ອງຍໍ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ທີ່ມີ ຜົນງານດີເດັ່ນປະເພດ I ໂດຍລາງວັນອັນມີກຽດນີ້ ມອບໂດຍ **ທ່ານ ສັນຕິພາບ ພົມວິຫານ** ລັດຖະມົນຕີກະຊວງ ການເງິນ.

ໃນພິທີອັນມີຄຸນຄ່ານີ້, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ກໍຖືເປັນໜຶ່ງໃນຄວາມພາກພູມໃຈ ແລະ ເປັນຜົນງານໃນການຈັດການຂໍ້ມູນທາງການເງິນ ຂອງບໍລິສັດທີ່ມີຄວາມຖືກຕ້ອງຊັດເຈນ ສ້າງຄວາມໝັ້ນໃຈໃຫ້ແກ່ ລູກຄ້າ, ຜູ້ຮ່ວມທຸລະກິດ ຕະຫຼອດຮອດສັງຄົມ ໃນການປະຕິບັດພັນທະອາກອນ ເພື່ອປະກອບສ່ວນໃນການສ້າງສາ ພັດທະນາປະເທດ ແລະ ຮັກສາສະຖຽນລະພາບທາງເສດຖະກິດຂອງປະເທດອີກດ້ວຍ.

